ຂອງຮັກວໍຊິງຕັນຂອງທ່ານ

# ປຶ້ມຄູ່ມືໂຄງການ Health Home

... ເພື່ອຊີວິດ ດີກວ່າເກົ່າ!



ການບໍລິການປະສານງານການປິ່ນປົວຂອງໂຄງການ **Health Home** ສຳລັບບຸກຄົນຜູ້ທີ່ມີເງື່ອນໄຂໄດ້ຮັບ

Washington State Department of Social & Health Services
*Transforming lives*

Washington State Health Care Authority

Washington State
Health Care Authority

[English] Language assistance services, including interpreters and translation of printed materials, are available free of charge. Call 1-877-501-2233 (TRS: 711).

[Amharic] የቋንቋ እገዛ አገልግሎት፣ አስተርጓሚ እና የሰነዶችን ትርጉም ጨምሮ በነጻ ይገኛል። 1-877-501-2233 (TRS: 711) ይደውሉ።

[Arabic] خدمات المساعدة في اللغات، بما في ذلك المترجمين الفوريين وترجمة المواد المطبوعة، متوفرة مجاناً، اتصل على رقم 1-877-501-2233 (TRS: 711).

[Burmese] ဘာသာပြန်ဆိုသူများနှင့် ထုတ်ပြန်ထားသည့် စာရွက်စာတမ်းများဘာသာပြန်ခြင်းအပါအဝင် ဘာသာစကားအထောက်အကူဝန်ဆောင်မှုများကို အခမဲ့ရနိုင်ပါသည်။ 1-877-501-2233 (TRS: 711) ကိုဖုန်းခေါ်ဆိုပါ။

[Cambodian] សេវាជំនួយភាសា រួមមានទាំងអ្នកបកប្រែផ្ទាល់មាត់ និង ការបកប្រែឯកសារបោះពុម្ព គឺអាចរកបានដោយឥតគិតថ្លៃ។ ហៅទូរស័ព្ទទៅលេខ 1-877-501-2233 (TRS: 711)។

[Chinese] 免费提供语言协助服务，包括口译员和印制资料翻译。请致电 1-877-501-2233 (TRS: 711)。

[Korean] 통역 서비스와 인쇄 자료 번역을 포함한 언어 지원 서비스를 무료로 이용하실 수 있습니다. 1-877-501-2233 (TRS: 711)번으로 전화하십시오.

[Laotian] ການບໍລິການດ້ານພາສາ, ລວມທັງນາຍແປພາສາ ແລະ ການແປເອກະສານຕີພິມ, ມີໄວ້ໃຫ້ຟຣີໂດຍບໍ່ຄິດຄ່າ. ໂທຫາເລກ 1-877-501-2233 (TRS: 711).

[Oromo] Tajajilli gargaarsa afaanii, nama afaan hiikuu fi ragaalee maxxanfaman hiikuun, kaffaltii malee ni argattu. 1-877-501-2233 (TRS: 711) irratti bilbilaa.

[Persian] خدمات کمک زبانی، از جمله مترجم شفاهی و ترجمه اسناد و مدارک (مطالب) چاپی، بصورت رایگان ارائه خواهد شد.با شماره 1-877-501-2233 (TRS: 711) تماس بگیرید.

[Punjabi] ਭਾਸ਼ਾ ਸਹਾਇਤਾ ਸੇਵਾਵਾਂ—ਦੁਭਾਸ਼ੀਏ ਅਤੇ ਪ੍ਰਿੰਟ ਕੀਤੀ ਹੋਈ ਸਮੱਗਰੀ ਦੇ ਅੰਨੁਵਾਦ ਸਮੇਤ—ਮੁਫ਼ਤ ਉਪਲੱਬਧ ਹਨ। 1-877-501-2233 (TRS: 711) 'ਤੇ ਕਾਲ ਕਰੋ।

[Romanian] Serviciile de asistență lingvistică, inclusiv cele de interpretariat și de traducere a materialelor imprimate, sunt disponibile gratuit. Apelați 1-877-501-2233 (TRS: 711).

[Russian] Языковая поддержка, в том числе услуги переводчиков и перевод печатных материалов, доступна бесплатно. Позвоните по номеру 1-877-501-2233 (TRS: 711).

[Somali] Adeego caawimaad luuqada ah, ay ku jirto turjubaano afka ah iyo turjumid lagu sameeyo waraaqaha la daabaco, ayaa lagu helayaa lacag la'aan. Wac 1-877-501-2233 (TRS: 711).

[Spanish] Hay servicios de asistencia con idiomas, incluyendo intérpretes y traducción de materiales impresos, disponibles sin costo. Llame al 1-877-501-2233 (TRS: 711).

[Swahili] Huduma za msaada wa lugha, ikiwa ni pamoja na wakalimani na tafsiri ya nyaraka zilizochapishwa, zinapatikana bure bila ya malipo. Piga 1-877-501-2233 (TRS: 711).

[Tagalog] Mga serbisyong tulong sa wika, kabilang ang mga tagapagsalin at pagsasalin ng nakalimbag na mga kagamitan, ay magagamit ng walang bayad. Tumawag sa 1-877-501-2233 (TRS: 711).

[Tigrigna] ተርጎምትን ናይ ዝተፅሓፉ ማተርያላት ትርጉምን ሓዊሱ ናይ ቋንቋ ሓገዝ ግልጋሎት፤ ብዘይ ምንም ክፍሊት ይርከቡ። ብ 1-877-501-2233 (TRS: 711) ደውሉ።

[Ukrainian] Мовна підтримка, у тому числі послуги перекладачів та переклад друкованих матеріалів, доступна безкоштовно. Зателефонуйте за номером 1-877-501-2233 (TRS: 711).

[Vietnamese] Các dịch vụ trợ giúp ngôn ngữ, bao gồm thông dịch viên và bản dịch tài liệu in, hiện có miễn phí. Gọi 1-877-501-2233 (TRS: 711).

# ປື້ມຄູ່ມືໂຄງການ **Health Home** ຂອງຣັດວໍຊິງຕັນຂອງທ່ານ

## ໂຄງການ Health Home ແມ່ນຫຍັງ?

Health Home ບໍ່ແມ່ນສະຖານທີ່ບ່ອນນຶ່ງ; ມັນແມ່ນຊຸດນຶ່ງຂອງການບໍລິການດ້ານການປະສານງານການປິ່ນປົວແນວນຶ່ງ. ມັນຖືກເອົາໃຫ້ໂດຍຜູ້ປະສານງານການປິ່ນປົວຜູ້ທີ່ຈະຊ່ວຍເຫລືອທ່ານໃຊ້ໃຫ້ໄດ້ດີທີ່ສຸດ ການບໍລິການ ແລະ ການອູ້ມຊູທຸກໆຢ່າງທີ່ ທ່ານກໍາລັງໄດ້ຮັບຢູ່ໃນປັດຈຸບັນ.

ການບໍລິການ Health Home ໄດ້ຖືກອອກແບບມາເພື່ອຈະອູ້ມຊູທ່ານໃນສະພາບຊໍາເຮື້ອທີ່ດໍາເນີນຕໍ່ໄປຂອງທ່ານ ແລະ ຊ່ວຍເຫລືອທ່ານໃຫ້ ບັນລຸເປົ້າໝາຍສຸຂະພາບທີ່ທ່ານເລືອກເອົາ. ການບໍລິການ Health Home ຈະສົ່ງເສີມໃຫ້ດີຂຶ້ນການປະສານ ງານຄວາມຕ້ອງການທາງດ້ານ ການພະຍາບານ ແລະ ການບໍລິການສັງຄົມອື່ນໆ, ເຊັ່ນວ່າການບໍລິການ ແລະ ການອູ້ມຊູລະຍະຍາວ, ການບໍລິການສຸຂະພາບການປະພຶດລວມທັງ ການບໍລິ ການດ້ານການຕິດຢາເສບຕິດ.ໂຄງການ Health Home ມີຈຸດປະສົງທີ່ຈະເພີ້ມການເຂົ້າເຖິງ ແລະ ການປະສານງານການປິ່ນປົວຂອງທ່ານ.



## ການບໍລິການ Health Home ແມ່ນຫຍັງ ແລະ ມັນສາມາດຊ່ວຍເຫລືອທ່ານໄດ້ແນວໃດແດ່?

- ການບໍຣິຫານການປິ່ນປົວຢ່າງກວ້າງຂວາງລວມເອົາການພັດທະນາ ແຜນການກະທໍາທາງສຸຂະພາບສ່ວນຕົວພ້ອມດ້ວຍເປົ້າໝາຍ ແລະຂັ້ນຕອນເພື່ອຈະບັນລຸເປົ້າໝາຍເຫລົ່ານັ້ນ.
- ການປະສານງານການປິ່ນປົວຈະຊ່ວຍສົ່ງເສີມການຕິດຕໍ່ພົວພັນນໍາທ່ານໝໍ, ຄອບຄົວ, ແລະ ຜູ້ເບິ່ງແຍງດູແລຂອງທ່ານ.
- ການວາງແຜນສໍາລັບການພັກປິ່ນຕໍ່ມາຊ່ວຍເຫລືອເມື່ອເວລາທ່ານອອກຈາກໂຮງພະຍາບານ ຫລື ສະຖາບັນການປິ່ນປົວ.
- ການບໍລິການອູ້ມຊູສ່ວນບຸກຄົນ ແລະ ຄອບຄົວຊີ້ບອກບົດບາດຂອງສະມາຊິກຄອບຄົວ, ການອູ້ມຊູທີ່ບໍ່ເປັນທາງການ, ແລະ ຜູ້ໃຫ້ການເບິ່ງແຍງດູແລ ເພື່ອຈະຊ່ວຍເຫລືອທ່ານໃຫ້ບັນລຸເປົ້າໝາຍສຸຂະພາບຂອງທ່ານ.
- ການແນະນໍາສົ່ງຕໍ່ໄປຫາການບໍລິການອູ້ມຊູຈາກຊຸມນຸມຊົນ ແລະ ສັງຄົມຈະຊ່ວຍເຫລືອນໍາສິ່ງອື່ນເຊັ່ນວ່າການຂົນສົ່ງໄປມາ, ອາຫານ, ແລະ ບ່ອນ ຢູ່ອາສັຍ.
- ການໂຄສະນາເຣື່ອງສຸຂະພາບເອົາການສຶກສາ ແລະ ການຊີ້ນໍາເຣື່ອງຄວາມຢູ່ດີມີແຮງໃຫ້ ເພື່ອຈະຊ່ວຍທ່ານໃຫ້ບັນລຸເປົ້າໝາຍສຸຂະພາບຂອງທ່ານ.

## ແມ່ນໃຜແດ່ມີເງື່ອນໄຂໄດ້ຮັບການບໍລິການ ຂອງ Health Home?

ທ່ານໄດ້ຮັບປື້ມນ້ອຍຄູ່ມື **Health Home** ຫົວນີ້ຍ້ອນວ່າທ່ານມີເງື່ອນໄຂໄດ້ຮັບໂຄງການ. ການບໍລິການແມ່ນສຳລັບບຸກຄົນທຸກໆອາຍຸຜູ້ທີ່ມີຊີວິດຢູ່ນຳສະພາບຊຳເຮື້ອທີ່ມີເງື່ອນໄຂໄດ້ຮັບຢ່າງຫນ້ອຍແນວນຶ່ງ. ສະພາບສຸຂະພາບຊຳເຮື້ອບາງຢ່າງທີ່ເຮັດໃຫ້ຄົນໃດຄົນນຶ່ງມີເງື່ອນໄຂໄດ້ຮັບຈະລວມເອົາ:

- ພະຍາດມະເລັງ
- ສະພາບການຫາຍໃຈຊຳເຮື້ອ
- ພະຍາດດີເມັນເຊັຽ ຫລື ອອລຊາຍເມີ
- ພະຍາດເບົາຫວານ
- ພະຍາດກະເພາະລຳໃສ້
- ພະຍາດຫົວໃຈ
- ຄວາມເສັຽອົງຄະ ຫລື ພະຍາດດ້ານສະຕິປັນຍາ
- ສະພາບສຸຂະພາບດ້ານການປະພຶດ
- ສະພາບກະດູກກ້າມເນື້ອ
- ພະຍາດກ່ຽວກັບປະສາດ

## ຜູ້ປະສານງານການປິ່ນປົວ Health Home ແມ່ນໃຜ?

ຜູ້ປະສານງານການປິ່ນປົວ **Health Home** ແມ່ນຄົນໃດຄົນນຶ່ງຜູ້ທີ່ສາ ມາດຊ່ວຍເຫລືອທ່ານ ໃຫ້ເຂົ້າຮ່ວມນຳໃນໂຄງ ການ **Health Home.** ຜູ້ປະສານງານການປິ່ນປົວຂອງທ່ານຈະເຮັດວຽກນຳທ່ານໃຫ້ໄດ້ຮັບການປິ່ນປົວທີ່ຖືກຕ້ອງ, ຈາກຜູ້ໃຫ້ການປິ່ນປົວທີ່ແທ້ຈິງ, ໃນເວລາ ແລະ ສະ ຖານທີ່ເຫມາະສົມ.

ຜູ້ປະສານງານການປິ່ນປົວຂອງທ່ານຈະຕິດຕໍ່ໄປຫາທ່ານເພື່ອຈະອະທິບາຍການບໍລິການດ້ານການປະສານງານການປິ່ນປົວໃຫ້ທ່ານຟັງ ແລະ ຕອບຄຳຖາມຕ່າງໆທີ່ທ່ານມີຢູ່ກ່ຽວກັບໂຄງການ **Health Home.**

## ທ່ານຈະໄດ້ຮັບການບໍລິການຂອງ Health Home ໄດ້ແນວໃດ?

ມັນມີຂັ້ນຕອນພື້ນຖານຢູ່ສາມຂັ້ນໃນການເຂົ້າຮ່ວມນຳໂຄງການ **Health Home:**

**1. ຖືກແຕ່ງຕັ້ງໃສ່ໂຄງການ Health Home:**
ເມື່ອໃດທ່ານມີເງື່ອນ ໄຂໄດ້ຮັບ, ທ່ານຈະຖືກຕິດແທດໃສ່ອົງການນຳຫນ້າ **Health Home,** ຜູ້ທີ່ຈະແຕ່ງຕັ້ງຜູ້ປະສານງານຄົນນຶ່ງເພື່ອຈະຕິດຕໍ່ຫາທ່ານ. ຜູ້ປະສານ ງານການປິ່ນປົວຈະຕອບຄຳຖາມຂອງທ່ານ ແລະ ທ່ານສາມາດຕັດສິນໃຈວ່າຈະເຂົ້າຮ່ວມນຳ ຫລື ບໍ່ເຂົ້າຮ່ວມນຳຢູ່ໃນໂຄງການ **Health Home.**

**2.** ***ຂຽນປະກອບ ໃບຟອມການແລກປ່ຽນຣາຍຣະອຽດ ແລະການອະນຸຍາດ:***
ຜູ້ປະສານ ງານການປິ່ນປົວຈະຊ່ວຍເຫລືອທ່ານຂຽນປະກອບໃບຟອມການບໍລິການຂອງ **Health Home** ເພື່ອຈະອະນຸ ຍາດໃຫ້ແລກປ່ຽນຣາຍຣະອຽດການພະຍາບານ ແລະ ການສັງຄົມຂອງທ່ານ. ຣາຍຣະອຽດຈະຖືກແລກປ່ຽນກັນນຳຜູ້ໃຫ້ການປິ່ນປົວ ແລະ ຄົນອື່ນໆທີ່ທ່ານເລືອກເອົາ.

**3. ເຮັດແຜນການກະທຳກ່ຽວກັບສຸຂະພາບ:** ທ່ານຈະສາມາດເລືອກ ເອົາເປົ້າຫມາຍສຸຂະພາບຂອງທ່ານເອງ, ຊຶ່ງຜູ້ປະສານງານການປິ່ນປົວ ຂອງ ທ່ານຈະລວມເອົາແຜນການກະທຳກ່ຽວກັບສຸຂະພາບຂອງທ່ານ.ອັນນີ້ຈະຖືກໃຊ້ເພື່ອຈະຊ່ວຍເຫລືອທ່ານ ແລະ ຜູ້ປະສານງານການປິ່ນປົວ ຂອງ ທ່ານໃຫ້ເຫັນວ່າທ່ານຕ້ອງການການບໍລິການ ແລະ ສິ່ງຊ່ວຍເຫລືອເພີ້ມເຕີມ,ເຊັ່ນວ່າ:

- ຄວາມຕ້ອງການດ້ານການປິ່ນປົວສຸຂະພາບ
- ການບໍລິການ ແລະ ການອູ້ມຊູຣະຍະຍາວ
- ການປິ່ນປົວສຸຂະພາບການປະພຶດ
- ແຫລ່ງຊ່ວຍເຫລືອຕາມຊຸມນຸມຊົນ
  - ບ່ອນຢູ່ອາສັຍ
  - ການຂົນສົ່ງໄປມາ

ທ່ານສາມາດຮ້ອງຂໍເອົາ ແລະ ຈັດຫາການຢັ້ຽມຢາມໃນອະນາຄົດໄດ້ໃນ ທຸກໆເວລາ, ໃນສະຖານທີ່ຕາມໃຈຊອບຂອງທ່ານ.

## ທ່ານຈະໄດ້ຢູ່ນຳຜູ້ໃຫ້ການປິ່ນປົວສຸຂະພາບຄົນປັດຈຸບັນ ແລະ ຜູ້ໃຫ້ການບໍລິການຄົນອື່ນຂອງທ່ານບໍ່?

ແມ່ນແລ້ວ, ການບໍລິການປັດຈຸບັນ ແລະ ຜູ້ໃຫ້ການປິ່ນປົວຂອງທ່ານຈະ ຍັງຢູ່ຄືເກົ່າ. ໃນຖານະເປັນພາກສ່ວນນຶ່ງຂອງ **Health Home,** ຜູ້ປະ ສານງານການປິ່ນປົວຂອງທ່ານອາດຈະຕິດຕໍ່ຫາຜູ້ໃຫ້ການປິ່ນປົວກ່ຽວກັບການຄຸ້ມກັນທີ່ຖືກປະສານງານກັນ ແລະ ການຜັນປ່ຽນຕໍ່ມາໃນການປິ່ນປົວຍ້ອນວ່າຄວາມຕ້ອງການຂອງທ່ານໄດ້ປ່ຽນແປງ.

## ຜູ້ໃຫ້ການປິ່ນປົວຈະຮູ້ຈັກໄດ້ແນວໃດວ່າທ່ານຢູ່ໃນໂຄງການ Health Home ຫລື ບໍ່ ແລະ ຈະຕິດຕໍ່ຫາໃຜ?

ເຂົາເຈົ້າສາມາດບອກໄດ້ໂດຍການກວດເບິ່ງໃນ **ProviderOne,** ຫລື ໂດຍການຕິດຕໍ່ໄປຫາ **Health Care Authority** ໄດ້ທີ່
**1-800-562-3022.**

## ທ່ານຕ້ອງໄດ້ຈ່າຍເງິນສຳລັບການບໍລິການ Health Home ບໍ່?

ບໍ່, ການບໍລິການເຫລົ່ານີ້ໄດ້ຖືກເອົາໃຫ້ໂດຍບໍ່ຄິດຄ່ານຳທ່ານ.

## ຖ້າຫາກວ່າທ່ານບໍ່ດີໃຈນຳຜູ້ປະສານງານການປິ່ນປົວຂອງທ່ານເດ?

ທ່ານສາມາດຕິດຕໍ່ໄປຫາອົງການປະສານງານການປິ່ນປົວ Health Home ຂອງທ່ານເພື່ອຮ້ອງຂໍເອົາຜູ້ປະສານງານການປິ່ນປົວຄົນໃຫມ່.

## ຖ້າຫາກວ່າທ່ານຍົກຍ້າຍໄປຢູ່ເຂດອື່ນຂອງຣັດເດ?

ທ່ານຈະຖືກແຕ່ງຕັ້ງຜູ້ປະສານງານການປິ່ນປົວຄົນໃຫມ່ໃຫ້. ທ່ານຈະຖືກຕິດຕໍ່ໄປຫາກ່ຽວກັບການບໍຣິການທີ່ດຳເນີນຕໍ່ໄປ.

## ຖ້າຫາກວ່າທ່ານເສັຽການຄຸ້ມກັນ Apple Health (Medicaid), ຫລື Medicare ເດ?

ຖ້າຫາກວ່າທ່ານເສັຽເງື່ອນໄຂໄດ້ຮັບ Apple Health (Medicaid), ທ່ານຈະບໍ່ມີເງື່ອນໄຂໄດ້ຮັບການບໍຣິການ Health Home ຢູ່ຕໍ່ໄປ.

ຖ້າຫາກວ່າທ່ານເສັຽເງື່ອນໄຂໄດ້ຮັບ Medicare ຂອງທ່ານ ແລະ ບໍ່ແມ່ນເງື່ອນໄຂໄດ້ຮັບ Apple Health ຂອງທ່ານ, ທ່ານອາດຈະຍັງ ມີເງື່ອນໄຂໄດ້ຮັບຢູ່ສຳລັບການບໍຣິກາ Health Home.

## ສິດທິຂອງການຮ້ອງທຸກ ແລະ ການອຸທອນຂອງທ່ານແມ່ນແນວໃດແດ່?

ທ່ານຍັງຮັກສາສິດທິຂອງການຮ້ອງທຸກ ແລະ ການອຸທອນຂອງ Apple Health ແລະ Medicare ປັດຈຸບັນຂອງທ່ານໄວ້ຢູ່.

## ຖ້າຫາກວ່າທ່ານບໍ່ຕ້ອງການຢາກຈະເຂົ້າຮ່ວມນຳໂຄງການ Health Home ຕໍ່ໄປອີກແລ້ວເດ?

ທ່ານສາມາດເວົ້າລົມນຳຜູ້ປະສານງານການປິ່ນປົວ Health Home ຂອງທ່ານ ແລະ ຂໍໃຫ້ເອົາທ່ານອອກຈາກໂຄງການ. ຖ້າຫາກວ່າທ່ານປ່ຽນໃຈຂອງທ່ານໃນເວລາພາຍຫລັງ, ທ່ານສາມາດໂທຫາ Health Care Authority ໄດ້ທີ່ 1-800-562-3022 ແລະ ຂໍໃຫ້ຖືກຈົດຊື່ເຂົ້າໃສ່ຄືນ ນຳໂຄງການ Health Home.

## ສຳລັບຄົນອະເມຣິກັນອິນດຽນ  ຫລືອາລາສກາດັ້ງເດີມ

ຄົນອະເມຣິກັນອິນດຽນ  ແລະອາລາສກາດັ້ງເດີມຜູ້ທີ່ມີເງື່ອນໄຂໄດ້ຮັບສາມາດເລືອກເອົາທີ່ຈະເຂົ້າຮ່ວມໃນໂຄງການ Health Home ໄດ້ໃນທຸກໆເວລາ ໂດຍການຕິດຕໍ່ໄປຫາ Health Care Authority, ຜູ້ທີ່ຈະພິສູດເງື່ອນໄຂໄດ້ຮັບ ແລະ ຊ່ວຍເຫລືອນຳການຈົດຊື່ເຂົ້ານຳ.



ຈະໂທຫາໃຜໃນເຫດການຂອງ
**ວິກິດຕະການທາງສຸຂະພາບ.**
ສຳລັບເຫັດການສຸກເສີນອິ່ມຂູ່ຕໍ່ຊີວິດ,
**ໂທຫາ 911.**

### ທາງແວບໄຊທ໌

ເພື່ອຣາຍຣະອຽດເພີ້ມເຕີມກ່ຽວກັບໂຄງການ Health Home, ຈົ່ງໄປທີ່ **hca.wa.gov/free-or-low-cost-health-care/apple-health-medicaid-coverage/health-home**.

HCA ໄດ້ມຸ່ງຫມັ້ນຕໍ່ການເອົາໃຫ້ການເຂົ້າເຖີງທີ່ເທົ່າທຽມກັນຕໍ່ການບໍຣິການຂອງພວກເຮົາ. ຖ້າຫາກວ່າທ່ານຕ້ອງການການອຳນວຍຄວາມສະດວກ, ຫລື ຕ້ອງການເອກສານໃນແບບຮູບຮ່າງແນວອື່ນ, ກະຣຸນາໂທຫາເລກ 1-800-562-3022. ບຸກຄົນຜູ້ທີ່ມີຄວາມເສັຽອົງຄະດ້ານການ ຟັງສຽງ ຫລື ການປາກເວົ້າກະຣຸນາໂທຫາ 711 ສຳລັບການບໍຣິການຕໍ່ສາຍ.

Washington State Health Care Authority
P.O. Box 45535
Olympia, WA 98504-5535
HCA 22-851 LA (6/21) Laotian